ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດປະເມີນຜົນກະທົບ

# ຂອງຮ່າງກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ)

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ

### 1.1 ຂໍ້ມູນຕິດຕໍ່ພົວພັນ

ຊື່ກະຊວງ: ກະຊວງຍຸຕິທຳ

ຊື່ກົມ/ພະແນກ: ກົມສົ່ງເສີມລະບົບຍຸຕິທຳ, ພະແນກສັນຊາດ

ຊື່ ແລະ ຕຳແໜ່ງຂອງພະນັກງານທີ່ຮັບຜິດຊອບ: ທ່ານ ບຸນເລີດ ສາຍມີກຍາ ຮອງຫົວໜ້າພະແນກ ສັນຊາດ

ເບີໂທລະສັບ: 020 55 62 17 88

### 1.2 ຊື່ນິຕິກຳ

ຊື່ຮ່າງນິຕິກຳ: ກົດໝາຍວ່າດ້ວຍ ສັນຊາດລາວ

ຮ່າງນິຕິກຳແມ່ນສະບັບ: ☐ ໃໝ່ ☑ ປັບປຸງ

### 1.3 ກຳນົດເວລາ

ກຳນົດເວລາໃນການປັບປຸງນິຕິກຳໃຫ້ສຳເລັດພາຍໃນ 12 ເດືອນ, ເດືອນພະຈິກ 2016 ຫາ ເດືອນທັນວາ 2017:

- ແຕ່ງຕັ້ງຄະນະຮັບຜິດຊອບປັບປຸງກົດໝາຍວ່າດ້ວຍ ສັນຊາດລາວ ວັນທີ 23 ພະຈິກ 2016;
- ໄດ້ຈັດກອງປະຊຸມຄົ້ນຄວ້າປຶກສາຫາລື ກ່ຽວກັບການປັບປຸງກົດໝາຍວ່າດ້ວຍ ສັນຊາດລາວ ໃນວັນທີ 12 ທັນວາ 2016;
- ສຳເລັດການສ້າງຮ່າງໃນເບື້ອງຕົ້ນ 10 ມີນາ2017;
- ສຳເລັດການທາບທາມຢູ່ ແຂວງ ຈຳປາສັກ ໃນວັນທີ 14 ມີນາ 2017;
- ສຳເລັດການທາບທາມຢູ່ ແຂວງ ສະຫວັນນະເຂດ ໃນວັນທີ 17 ມີນາ 2017;
- ສະເໜີຮ່າງກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ) ເຂົ້າພິຈາລະນາໃນກອງປະຊຸມລັດຖະບານ
  ເດືອນ ກໍລະກົດ 2017;
- ສະເໜີຮ່າງກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ) ເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VIII.

## 2. ບັນຫາ ແລະ ຈຸດປະສົງ

### 2.1 ບັນຫາ

ກົດໝາຍວ່າດ້ວຍ ສັນຊາດລາວ ສະບັບທຳອິດ ຖືກປະກາດໃຊ້ໃນວັນທີ 29 ພະຈິກ 1990 ແລະ ມາຮອດ ປີ 2004 ເຫັນວ່າວຽກງານດັ່ງກ່າວ ມີຫຼາຍບັນຫາເກີດຂຶ້ນຕາມການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ

ແລະ ວຽກງານສັນຊາດກໍເປັນວຽກງານໜຶ່ງທີ່ພົວພັນກັບຫຼາຍພາກສ່ວນ ໃນການຄົ້ນຄວ້າພິຈາລະນາ ຈຶ່ງໄດ້ມີການປັບປຸງ ແລະ ປະກາດໃຊ້ກົດໝາຍວ່າດ້ວຍ ສັນຊາດລາວ ສະບັບເລກທີ 05/ສພຊ, ລົງວັນທີ 17 ພຶດສະພາ 2004 ຊຶ່ງເປັນສະບັບທີ່ໃຊ້ຢູ່ໃນປັດຈຸບັນ, ໃນກົດໝາຍສະບັບນີ້ເວົ້າເຖິງອົງການທີ່ພິຈາລະນາຄົ້ນຄວ້າວຽກງານສັນຊາດ ມີອົງການປົກຄອງທ້ອງຖິ່ນ, ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ຄະນະປະຈຳສະພາແຫ່ງຊາດ ເປັນອົງການສຸດທ້າຍ ໃນການຕົກລົງອະນຸ ມັດກ່ຽວກັບການຂໍເອົາ, ຂໍເອົາຄືນ, ການເສຍສັນຊາດ, ການຂໍປະ ແລະ ການຖອນສັນຊາດລາວຄືນ.

ຜ່ານການນຳໃຊ້ກົດໝາຍວ່າດ້ວຍ ສັນຊາດລາວ ສະບັບປັບປຸງ ປີ 2004 ເປັນໄລຍະເວລາ 13 ປີ ເຫັນວ່າ ກົດໝາຍສະບັບດັ່ງກ່າວ ບໍ່ສອດຄ່ອງກັບສະພາບໃນປັດຈຸບັນ ຊຶ່ງປະກອບມີບັນຫາ ດັ່ງນີ້:

- ກົດໝາຍສະບັບປີ 2004 ບໍ່ໄດ້ກຳນົດລະອຽດ ກ່ຽວກັບ ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ, ເຮັດໃຫ້ການເຮັດວຽກຂອງແຕ່ພາກສ່ວນ ແລະ ຜູ້ຮ້ອງຂໍເອົາສັນຊາດ ມີຄວາມສັບສົນ;
- ກຳນົດບັນດາເງື່ອນໄຂໃນການຂໍເອົາສັນຊາດລາວ ບໍ່ຈະແຈ້ງ;
- ບໍ່ມີພາລະບົດບາດຂອງຂະແໜງພາຍໃນ ທີ່ມີສ່ວນຮ່ວມໃນການພິຈາລະນາ ກ່ຽວກັບວຽກງານສັນຊາດ;
- ບໍ່ໄດ້ກຳນົດກ່ຽວກັບການປະກອບເອກະສານ ແລະ ການຍື່ນເອກະສານຫາພາກສ່ວນທີ່ກ່ຽວຂ້ອງ;
- ໃນກົດໝາຍວ່າດ້ວຍ ສັນຊາດລາວ ສະບັບປັດຈຸບັນ ການຍື່ນເອກະສານ ແມ່ນມີຫຼາຍຂັ້ນຫຼາຍຕອນ ບາງພາກສ່ວນທີ່ມີໜ້າທີ່ຮັບຜິດຊອບໃນການຄົ້ນຄວ້າພິຈາລະນາ ກໍບໍ່ຮູ້ພາລະບົດບາດຂອງຕົນ, ການເສຍຄ່າທຳນຽມ ແລະ ຄ່າບໍລິການ ກໍມີຢູ່ຫຼາຍບ່ອນ;
- ລັດຖະທຳມະນູນ ສະບັບເລກທີ 63/ສພຊ, ລົງວັນທີ 08 ທັນວາ 2015 ແລະ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016 ໄດ້ກຳນົດ ການອະນຸມັດໃຫ້ສັນຊາດລາວ, ໃຫ້ສັນຊາດລາວຄືນ, ໃຫ້ເສຍສັນຊາດ, ໃຫ້ປະສັນຊາດລາວ ແລະ ການຖອນສັນຊາດລາວຄືນ ແມ່ນສິດ ແລະ ໜ້າທີ່ ຂອງລັດຖະບານ ຊຶ່ງກົດໝາຍສະບັບປີ 2004 ໄດ້ກຳນົດໃຫ້ເປັນສິດ ແລະ ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດ.

ຈາກບັນຫາທີ່ກ່າວມາຂ້າງເທິງນີ້ ອາດເຮັດໃຫ້ເກີດມີຄວາມສ່ຽງ ດັ່ງນີ້:

- ເກີດຄວາມບໍ່ເຊື່ອໝັ້ນຕໍ່ກົດໝາຍຂອງ ສປປ ລາວ ຈາກທັງພາຍໃນ ແລະ ຕ່າງປະເທດ ເນື່ອງຈາກກົດໝາຍຂັດກັນເອງ.
- ແຕ່ລະພາກສ່ວນທີ່ເຮັດວຽກໃນການຄົ້ນຄວ້າພິຈາລະນາກ່ຽວກັບວຽກງານສັນຊາດ ບໍ່ຮູ້ວ່າສິດ ແລະ ໜ້າທີ່ຂອງຕົນມີແນວໃດໃນການຄົ້ນຄວ້າ ເພື່ອຈະສາມາດເຮັດວຽກກັບພາກສ່ວນທີ່ກ່ຽວຂ້ອງໄດ້ຢ່າງເດີນແມ່ນແລ່ນສະດວກ;
- ແຕ່ລະພາກສ່ວນກໍຈະເຮັດວຽກບໍ່ເປັນເອກະພາບກັນ ໃນການພິຈາລະນາບັນດາເງື່ອນໄຂຂອງຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນເຊື້ອຊາດລາວ ເພື່ອຈຳແນກໃຫ້ເຫັນຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ຜູ້ເປັນຊ່ຽວຊານ ທີ່ຈະສາມາດມາປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ແລະ ຄົນເຊື້ອຊາດລາວຜູ້ມີອາຍຸແຕ່ 60 ປີ ຂຶ້ນໄປ ທີ່ຕ້ອງການເອົາສັນຊາດລາວຄືນ;
- ໃນກົດໝາຍວ່າດ້ວຍສັນຊາດລາວ ສະບັບປັດຈຸບັນ ບໍ່ໄດ້ກຳນົດພາລະບົດບາດຂອງຂະແໜງການພາຍໃນທີ່ມີສິດໃນການຄົ້ນຄວ້າພິຈາລະນາວຽກງານສັນຊາດ ກໍຈະເຮັດໃຫ້ພາກສ່ວນດັ່ງກ່າວນີ້ ບໍ່ສາ ມາດພິຈາລະນາຄົ້ນຄວ້າວຽກງານສັນຊາດໄດ້;

- ໃນກົດໝາຍວ່າດ້ວຍສັນຊາດລາວ ສະບັບປັດຈຸບັນ ບໍ່ໄດ້ກຳນົດລາຍການປະກອບເອກະສານ, ການຍື່ນເອກະສານ ທີ່ພົວພັນກັບຂະແໜງການທີ່ກ່ຽວຂ້ອງໃຫ້ຈະແຈ້ງ ເຮັດໃຫ້ແຕ່ລະພາກສ່ວນບໍ່ເຂົ້າໃຈໃນການເຮັດວຽກງານດັ່ງກ່າວ;
- ໃນກົດໝາຍວ່າດ້ວຍສັນຊາດລາວ ສະບັບປັດຈຸບັນ ໄດ້ກຳນົດສິດ ແລະ ໜ້າທີ່ ໃນການຕົກລົງການໃຫ້ສັນຊາດ, ການມອບຮັບສັນຊາດ ແມ່ນ ຄະນະປະຈຳສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເປັນຜູ້ຮັບຜິດຊອບ ແຕ່ລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍລັດຖະ ບານ ສະບັບປັດຈຸບັນ ໄດ້ມອບສິດ ແລະ ໜ້າທີ່ ໃນການຕົກລົງອະນຸມັດກ່ຽວກັບສັນຊາດລາວແມ່ນລັດຖະບານ ເປັນຜູ້ພິຈາລະນາ, ສະນັ້ນຈຶ່ງເຮັດໃຫ້ການປະຕິບັດວຽກງານສັນຊາດ ມີຄວາມຫຍຸ້ງຍາກຊັບຊ້ອນ.

2.2 **ຈຸດປະສົງ**

ໃນການປັບປຸງກົດໝາຍວ່າດ້ວຍ ສັນຊາດລາວ ໃນຄັ້ງນີ້ ທາງຄະນະຮັບຜິດຊອບຄາດຄະເນເຖິງຜົນໄດ້ຮັບດັ່ງນີ້:

- ໃຫ້ແຕ່ລະພາກສ່ວນຮູ້ໄດ້ເຖິງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ກ່ຽວກັບການປະຕິບັດວຽກງານສັນຊາດ;
- ເຮັດໃຫ້ມີຄວາມເປັນລະບົບຂຶ້ນກວ່າເກົ່າ ໃນການຈັດຕັ້ງປະຕິບັດວຽກງານສັນຊາດ;
- ສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍ ລັດຖະບານ ສະບັບປັດຈຸບັນ;
- ອຳນວຍຄວາມສະດວກໃຫ້ແກ່ຜູ້ທີ່ຕ້ອງການຂໍເອົາສັນຊາດລາວ, ຂໍເອົາສັນຊາດລາວຄືນ ແລະ ຂໍປະສັນຊາດລາວ ໃນການປະກອບເອກະສານ ແລະ ການຍື່ນຄຳຮ້ອງ.

## 3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ

### 3.1 ທາງເລືອກທີ 1: ຮັກສາຕາມສະພາບຄືໃນປັດຈຸບັນ

**ຜົນດີ:**

- ບໍ່ເສຍເວລາໃນການຄົ້ນຄວ້າປັບປຸງກົດໝາຍ;
- ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ປະຕິບັດວຽກງານສັນຊາດ ຕາມກົດໝາຍສະບັບປັດຈຸບັນມີຄວາມເຂົ້າໃຈວຽກງານ ກໍຄືສິດ ແລະ ໜ້າທີ່ຂອງຕົນໃນລະດັບໜຶ່ງ.

**ຜົນເສຍ:**

- ລັດຖະບານຈະຕ້ອງໄດ້ສູນເສຍງົບປະມານເພີ່ມຂຶ້ນ ໃນການຈັດຕັ້ງປະຕິບັດວຽກງານສັນຊາດ;
- ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ປະຕິບັດວຽກງານຕົວຈິງ ມີຄວາມສັບສົນໃນການອ້າງອີງນິຕິກຳໃນການປະຕິບັດໜ້າທີ່;
- ຜູ້ຮ້ອງຂໍສັນຊາດມີຄວາມຫຍຸ້ງຍາກສັບສົນ ເນື່ອງຈາກກົດໝາຍກຳນົດບໍ່ຈະແຈ້ງ;
- ເປັນຊ່ອງວ່າງໃຫ້ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ຮັບຜິດຊອບວຽກງານສັນຊາດ ສວຍໃຊ້ໜ້າທີ່ໃນການຫາຜົນປະໂຫຍດສ່ວນຕົວ.

### 3.2 ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນນິຕິກຳ

ການທີ່ຈະເຮັດໃຫ້ສາມາດຈັດຕັ້ງປະຕິບັດວຽກງານສັນຊາດຕໍ່ໄປໄດ້ ທາງລັດຖະບານຕ້ອງໄດ້ທຸ້ມເທງົບປະມານ ເພື່ອຝຶກອົບຮົມໃຫ້ແກ່ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ທີ່ປະຕິບັດວຽກງານນີ້ ໃຫ້ມີຄວາມເຂົ້າໃຈແລະ ເປັນເອກະພາບກັນ ກ່ຽວກັບການປະກອບເອກະສານ, ການພິຈະລະນາເງື່ອນໄຂຂອງຜູ້ຮ້ອງຂໍ ແລະ ຂັ້ນຕອນ

ໃນການພິຈາລະນາຂອງແຕ່ລະຂັ້ນ, ແຕ່ລະພາກສ່ວນ, ຜູ້ປະຕິບັດວຽກງານເອງກໍຈະມີຄວາມສັບສົນ ເນື່ອງຈາກຈະຕ້ອງໄດ້ຄົ້ນຄວ້າຫຼາຍກົດໝາຍ ແລະ ອາດຈະເຮັດໃຫ້ການປະຕິບັດໜ້າທີ່ຂອງເຂົາເຈົ້າມີຄວາມຊັກຊ້າ, ນອກນີ້ ຍັງຕ້ອງໄດ້ມີການໂຄສະນາເຜີຍແຜ່ກ່ຽວກັບວຽກງານສັນຊາດ ໃຫ້ແກ່ປະຊາຊົນ, ຜູ້ທີ່ຕ້ອງການຮ້ອງຂໍເອົາສັນຊາດ ຫຼື ປະສັນຊາດລາວ ຕື່ມອີກ ຊຶ່ງລັດຖະບານກໍຈະຕ້ອງໄດ້ເສຍງົບປະມານເປັນຈໍານວນຫຼາຍ ເພື່ອໃຫ້ສາມາດປະຕິບັດວຽກງານສັນຊາດຕໍ່ໄປໄດ້.

**ຜົນດີ:**

- ລັດຖະບານຈະບໍ່ເສຍງົບປະມານ, ເວລາໃນການຄົ້ນຄວ້າປັບປຸງ ແລະ ເຜີຍແຜ່ກົດໝາຍ;
- ພາກສ່ວນທີ່ເປັນເຈົ້າການ ສາມາດຂຶ້ນແຜນງົບປະມານ ແລ້ວຈັດຕັ້ງປະຕິບັດໄດ້ທັນທີ;
- ເປັນການສ້າງຄວາມເຂົ້າໃຈ ກ່ຽວກັບວຽກງານສັນຊາດ ໃຫ້ແກ່ຜູ້ທີ່ມີຄວາມຕ້ອງການຮ້ອງຂໍສັນຊາດ ແລະ ພະນັກງານ-ລັດຖະກອນ ຜູ້ປະຕິບັດວຽກງານນີ້.

**ຜົນເສຍ:**

- ລັດຖະບານຈະຕ້ອງໄດ້ນໍາໃຊ້ງົບປະມານເພີ່ມຂຶ້ນ ໃນການຈັດຕັ້ງປະຕິບັດວຽກງານສັນຊາດ;
- ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ປະຕິບັດວຽກງານຕົວຈິງ ມີຄວາມສັບສົນໃນການອ້າງອີງນິຕິກໍາໃນການປະຕິບັດໜ້າທີ່;
- ຜູ້ຮ້ອງຂໍສັນຊາດມີຄວາມຫຍຸ້ງຍາກສັບສົນ ເນື່ອງຈາກກົດໝາຍກໍານົດບໍ່ຈະແຈ້ງ;
- ເປັນຊ່ອງວ່າງໃຫ້ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ຮັບຜິດຊອບວຽກງານສັນຊາດ ສວຍໃຊ້ໜ້າທີ່ໃນການຫາຜົນປະໂຫຍດສ່ວນຕົວ;
- ເປັນການເພີ່ມຈໍານວນຂອງນິຕິກໍາທີ່ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຈະຕ້ອງໄດ້ປະຕິບັດ.

3.3 **ທາງເລືອກທີ 3: ດໍາເນີນການສ້າງ ຫຼື ປັບປຸງນິຕິກໍາ**

ອະທິບາຍໂດຍຫຍໍ້ກ່ຽວກັບອົງປະກອບທີ່ສໍາຄັນ ແລະ ເງື່ອນໄຂທີ່ຕ້ອງປະຕິບັດຕາມ ຂອງການຮ່າງນິຕິກໍາ:

ຜ່ານການຄົ້ນຄວ້າພິຈາລະນາທາງເລືອກທັງສອງ ທີ່ກ່າວມາຂ້າງເທິງແລ້ວ ເຫັນວ່າທາງເລືອກທີ 3 ນີ້ ເປັນທາງເລືອກທີ່ດີທີ່ສຸດ ແລະ ໄດ້ຄົ້ນຄວ້າພິຈາລະນາເບິ່ງນິຕິກໍາທຸກຂັ້ນແລ້ວ ເຫັນວ່າບໍ່ມີນິຕິກໍາຂັ້ນໃດທີ່ສາມາດແກ້ໄຂບັນຫາທີ່ເກີດຂຶ້ນໄດ້, ບໍ່ມີນິຕິກໍາຂັ້ນໃດທີ່ຈະສາມາດແກ້ໄຂກົດໝາຍໄດ້, ມີແຕ່ກົດໝາຍເທົ່ານັ້ນທີ່ສາມາດແກ້ໄຂບັນຫາຂອງກົດໝາຍເອງ ແລະ ມີແຕ່ປັບປຸງກົດໝາຍວ່າດ້ວຍສັນຊາດລາວເທົ່ານັ້ນ ຈຶ່ງຈະແກ້ໄຂບັນຫາທີ່ເກີດຂຶ້ນນີ້ໄດ້ ຊຶ່ງໃນການປັບປຸງກົດໝາຍສະບັບນີ້ ຈະເຮັດໃຫ້:

- ແຕ່ລະພາກສ່ວນຮູ້ໄດ້ເຖິງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ກ່ຽວກັບການປະຕິບັດວຽກງານສັນຊາດ;
- ເຮັດໃຫ້ມີຄວາມເປັນລະບົບຂຶ້ນກວ່າເກົ່າ ໃນການຈັດຕັ້ງປະຕິບັດວຽກງານສັນຊາດ;
- ສອດຄ່ອງກັບລັດຖະທໍາມະນູນ ແລະ ກົດໝາຍວ່າດ້ວຍ ລັດຖະບານ ສະບັບປັດຈຸບັນ;
- ອໍານວຍຄວາມສະດວກໃຫ້ແກ່ຜູ້ທີ່ຕ້ອງການຂໍເອົາສັນຊາດລາວ, ຂໍເອົາສັນຊາດລາວຄືນ ແລະ ຂໍປະສັນຊາດລາວ ໃນການປະກອບເອກະສານ ແລະ ການຍື່ນຄໍາຮ້ອງ.

ນອກຈາກຜົນກະທົບດ້ານບວກທີ່ກ່າວມາຂ້າງເທິງແລ້ວ ກໍປາສະຈາກບໍ່ໄດ້ ເຖິງຜົນກະທົບດ້ານລົບ ທີ່ອາດຈະເກີດຂຶ້ນ ເປັນຕົ້ນ ການເຜີຍແຜ່ກົດໝາຍບໍ່ທົ່ວເຖິງ ເຮັດໃຫ້ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ປະຕິບັດວຽກງານ ຫຼື ຜູ້ທີ່ມີຄວາມຕ້ອງການ ຮ້ອງຂໍສັນຊາດ ບໍ່ສາມາດຮັບຮູ້ໄດ້ເຖິງ ກົດໝາຍສະບັບປັບປຸງໃໝ່ ເຮັດໃຫ້ການປະຕິບັດວຽກງານສັນຊາດມີຄວາມຫຍຸ້ງຍາກ, ການຄົ້ນຄວ້າປັບປຸງກົດໝາຍບໍ່ເລິກເຊິ່ງ ອາດຈະບໍ່ພຽງແຕ່ບໍ່ສາມາດແກ້ໄຂບັນຫາທີ່ມີຢູ່ໄດ້ເທົ່ານັ້ນ, ແຕ່ຍັງຈະເປັນການເພີ່ມບັນຫາໃໝ່ຂຶ້ນມາຕື່ມອີກ.

**ຜົນດີ:**

- ປະຢັດງົບປະມານໃນການຈັດຝຶກອົບຮົມ ແລະ ເຜີຍແຜ່ວຽກງານສັນຊາດ;
- ການຈັດຕັ້ງປະຕິບັດວຽກງານ ຈະມີບ່ອນອີງທີ່ແນ່ນອນ;
- ມີການແບ່ງຄວາມຮັບຜິດຊອບຂອງແຕ່ລະພາກສ່ວນຢ່າງຈະແຈ້ງ;
- ເປັນການປິດຊ່ອງວ່າງຂອງກົດໝາຍສະບັບປະຈຸບັນ ທີ່ບໍ່ທັນໄດ້ກຳນົດບາງບັນຫາ ຫຼື ກຳນົດບໍ່ຈະແຈ້ງ;
- ເປັນການປະກອບສ່ວນໃນການຮັກສາຄວາມສະຫງົບໃຫ້ແກ່ສັງຄົມ.

**ຜົນເສຍ:**

- ເສຍງົບປະມານ ແລະ ເວລາໃນການຄົ້ນຄວ້າ ລວມທັງການເຜີແຜ່ກົດໝາຍສະບັບປັບປຸງໃໝ່;
- ບໍ່ສາມາດຈັດຕັ້ງປະຕິບັດໄດ້ໃນທັນທີ, ຈະຕ້ອງໄດ້ມີການເຜີຍແຜ່ກົດໝາຍ ແລະ ຕ້ອງໄດ້ໃຊ້ເວລາໃນການຈັດຕັ້ງປະຕິບັດ.

### 3.4 ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກຳ

#### 3.4.1 ເຫດຜົນໃນການເລືອກເອົາວິທີການດັ່ງກ່າວ

ອະທິບາຍເຫດຜົນໃນການພິຈາລະນາເອົາການສ້າງ ຫຼື ປັບປຸງນິຕິກຳ ເປັນທາງເລືອກໃນການແກ້ໄຂບັນຫາທຽບໃສ່ທາງເລືອກອື່ນໆ (ຕົວຢ່າງ: ຜົນປະໂຫຍດສູງສຸດທີ່ໄດ້ຮັບ, ຄວາມສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດເຮົາ).

ສັງລວມຄຳເຫັນເບື້ອງຕົ້ນຂອງພາກສ່ວນທີ່ໄດ້ຮັບຜົນກະທົບຈາກຮ່າງນິຕິກຳ (ສັງຄົມ, ທຸລະກິດ, ລັດຖະບານ) ຕໍ່ 3 ທາງເລືອກ ແລະ ທາງເລືອກໃດທີ່ຖືກຄັດເລືອກໂດຍພາກສ່ວນດັ່ງກ່າວ:

ເນື່ອງຈາກບັນຫາຫຼັກທີ່ສົ່ງຜົນໃຫ້ຕ້ອງມີການປັບປຸງກົດໝາຍຄັ້ງນີ້ ແມ່ນເກີດຈາກການຂັດກັນ ລະຫວ່າງລັດຖະທຳມະນູນ, ກົດໝາຍວ່າດ້ວຍລັດຖະບານ ແລະ ກົດໝາຍວ່າດ້ວຍສັນຊາດລາວ ຊຶ່ງລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍລັດຖະບານ ໄດ້ກຳນົດໃຫ້ລັດຖະບານມີສິດພິຈາລະນາກ່ຽວກັບວຽກງານສັນຊາດ, ແຕ່ກົດໝາຍວ່າດ້ວຍສັນຊາດລາວ ພັດກຳນົດໃຫ້ເປັນສິດຂອງຄະນະປະຈຳສະພາແຫ່ງຊາດ, ຖ້າຫາກບໍ່ປັບປຸງກົດໝາຍວ່າດ້ວຍສັນຊາດລາວ ບັນຫານີ້ກໍຈະບໍ່ໄດ້ຮັບການແກ້ໄຂ ແລະ ນອກຈາກນີ້ ການປັບປຸງກົດໝາຍຄັ້ງນີ້ ກໍເປັນການແກ້ໄຂບັນຫາທີ່ສະສົມມາຈາກການຖອດຖອນບົດຮຽນຜ່ານການນຳໃຊ້ກົດໝາຍສະບັບປັດຈຸບັນ.

#### 3.4.2 ການປັບປຸງຮ່າງນິຕິກຳ

ຖ້າແມ່ນການປັບປຸງຮ່າງນິຕິກຳ, ໃຫ້ສະໜອງຂໍ້ມູນກ່ຽວກັບການປະເມີນການຈັດຕັ້ງປະຕິບັດນິຕິກຳດັ່ງກ່າວໃນໄລຍະຜ່ານມາ.

ຜ່ານການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສັນຊາດລາວ ສະບັບປີ 2004 ສາມາດຖອດຖອນບົດຮຽນໄດ້ ດັ່ງນີ້:

- ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ປະຕິບັດວຽກງານສັນຊາດ ບໍ່ມີຄວາມເຂົ້າໃຈຢ່າງຈະແຈ້ງກ່ຽວກັບຂັ້ນຕອນ, ເງື່ອນໄຂ, ການຍື່ນເອກະສານຮ້ອງຂໍສັນຊາດ ເຮັດໃຫ້ມີຜູ້ຮ້ອງຂໍໃນອັດຕາ 20-30% ແມ່ນບໍ່ຄົບເງື່ອນໄຂການຂໍເອົາສັນຊາດລາວ;
- ການປະກອບເອກະສານ ແມ່ນມີຫຼາຍພາກສ່ວນອອກແບບພິມກ່ຽວກັບວຽກງານສັນຊາດທີ່ບໍ່ເປັນເອກະພາບກັນ, ເຮັດໃຫ້ຜູ້ຮ້ອງຂໍມີຄວາມຫຍຸ້ງຍາກສັບສົນໃນການປະກອບເອກະສານ;
- ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ (ລວມທັງນາຍໜ້າ) ຜູ້ຮັບຜິດຊອບວຽກງານສັນຊາດ ບໍ່ມີຄວາມຮັບຜິດຊອບເທົ່າທີ່ຄວນ ເນື່ອງຈາກກົດໝາຍບໍ່ໄດ້ກຳນົດມາດຕະການຕໍ່ຜູ້ກ່ຽວ;

- ໃນກົດໝາຍສະບັບປັດຈຸບັນ ໄດ້ກຳນົດສິດ ແລະ ໜ້າທີ່ ໃນການຕົກລົງອະນຸມັດກ່ຽວກັບວຽກງານສັນຊາດ ເປັນຂອງຄະນະປະຈຳສະພາແຫ່ງຊາດ, ນອກນີ້ ກົດໝາຍສະບັບປັດຈຸບັນຍັງບໍ່ໄດ້ກຳນົດໃຫ້ກະຊວງພາຍໃນ ມີສ່ວນຮ່ວມໃນການຄົ້ນຄວ້າພິຈາລະນາ ຫຼື ຈົດທະບຽນການປ່ຽນສັນຊາດ.

**3.4.3 ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ**

- ນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ຈະຈຳກັດການແຂ່ງຂັນທາງທຸລະກິດໃນ ສປປ ລາວ ຫຼື ບໍ່ ?

☐ ຈຳກັດ ☑ ບໍ່ຈຳກັດ

- ຖ້າມີການຈຳກັດ ກະລຸນາອະທິບາຍວ່າຈະມີການຈຳກັດການແຂ່ງຂັນທາງທຸລະກິດຄືແນວໃດ ແລະ ຍ້ອນ ຫຍັງ ?

**3.4.4 ພັນທະຕໍ່ສາກົນ**

- ຮ່າງນິຕິກຳ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼື ບໍ່ ?

☐ແມ່ນ ☑ ບໍ່ແມ່ນ

- ຖ້າແມ່ນ, ແມ່ນພັນທະອັນໃດ ?

☐WTO ☐AEC ☐FTA ☐ອື່ນໆ (ກຳນົດແຈ້ງ)

- ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ ມີຄວາມສອດຄ່ອງກັບພັນທະສາກົນນັ້ນ ຫຼື ບໍ່ ?

☐ສອດຄ່ອງ ☐ບໍ່ສອດຄ່ອງ, ຖ້າບໍ່ສອດຄ່ອງ ກະລຸນາອະທິບາຍແຈ້ງ.

(*ຂໍ້ແນະນຳ - ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບເງື່ອນໄຂຕໍ່ພັນທະສາກົນ ໃຫ້ພົວພັນນຳກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ*)

**3.4.5 ນິຕິກຳທີ່ພົວພັນ**

ບັນດານິຕິກຳ ທີ່ພົວພັນກັບຮ່າງກົດໝາຍທີ່ສະເໜີປັບປຸງ ມີດັ່ງນີ້:

- ລັດຖະທຳມະນູນ ສະບັບເລກທີ 63/ສພຊ, ລົງວັນທີ 08 ທັນວາ 2015;
- ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.

ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຄວາມສອດຄ່ອງກັບນິຕິກຳທີ່ກ່ຽວຂ້ອງ ຫຼື ບໍ່ ?

☑ ສອດຄ່ອງ ☐ບໍ່ສອດຄ່ອງ, ຖ້າບໍ່ສອດຄ່ອງ ກະລຸນາອະທິບາຍແຈ້ງ.

## 4. ຄາດຄະເນຜົນກະທົບ ແລະ ການທາບທາມຄຳເຫັນ

### 4.1 ສັງຄົມ

**4.1.1 ຜົນກະທົບ**

ກຸ່ມຄົນທີ່ໄດ້ຮັບຜົນກະທົບຈາກການປັບປຸງ ກົດໝາຍວ່າດ້ວຍສັນຊາດລາວ ແມ່ນພົນລະເມືອງລາວ, ຄົນເຊື້ອຊາດລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ໃນ ສປປ ລາວ ແລະ ພົນລະເມືອງລາວທີ່ດຳລົງຊີວິດຢູ່ຕ່າງປະເທດ ຊຶ່ງບຸກຄົນເຫຼົ່ານັ້ນຈະມີຄວາມສະດວກຂຶ້ນກວ່າເກົ່າ ໃນການປະກອບເອກະສານ ແລະ ການຍື່ນເອກະສານ ຂໍເອົາສັນຊາດລາວ, ຂໍປະສັນຊາດລາວ ແລະ ຂໍເອົາສັນຊາດລາວຄືນ.

**ຜົນກະທົບທາງບວກ:**

- ມີຄວາມສະດວກໃນການປະກອບເອກະສານ;
- ເຂົ້າໃຈຂັ້ນຕອນໃນການຮ້ອງຂໍກ່ຽວກັບສັນຊາດ;
- ຫຼຸດຂັ້ນຕອນໃນການຮ້ອງຂໍກ່ຽວກັບສັນຊາດ;

- ປະຢັດເວລາໃນການຮ້ອງຂໍ.

**ຜົນກະທົບທາງລົບ:**

- ເສຍສັນຊາດລາວໄດ້ງ່າຍຂຶ້ນ;
- ການຮ້ອງຂໍເອົາສັນຊາດມີຄວາມຫຍຸ້ງຍາກຂຶ້ນ ເນື່ອງຈາກເງື່ອນໄຂໃນການໄດ້ຮັບສັນຊາດລາວເຂັ້ມງວດຂຶ້ນ.

**4.1.2 ເງື່ອນໄຂໃນການປະຕິບັດນິຕິກຳ**

ການທີ່ຈະໃຫ້ສັງຄົມສາມາດຈັດຕັ້ງປະຕິບັດກົດໝາຍສະບັບປັບປຸງໃໝ່ນີ້ ຈະຕ້ອງມີການເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້, ເຂົ້າໃຈກ່ຽວກັບກົດໝາຍສະບັບປັບປຸງໃໝ່ ໂດຍແຍກເປັນບຸກຄົນທົ່ວໄປ ແລະ ກຸ່ມເປົ້າໝາຍ ຊຶ່ງບຸກຄົນທົ່ວໄປຈະເປັນການເຜີຍແຜ່ໃຫ້ຮູ້ໂດຍພື້ນຖານກ່ຽວກັບວຽກງານສັນຊາດ ເພື່ອໃຫ້ຮູ້ກ່ຽວກັບການເສຍສັນຊາດລາວ, ສ່ວນກຸ່ມເປົ້າໝາຍ ຈະແບ່ງເປັນກຸ່ມທີ່ຕ້ອງການຂໍເອົາສັນຊາດລາວ, ຂໍປະສັນຊາດລາວ, ຂໍເອົາສັນຊາດລາວຄືນ ເພື່ອອະທິບາຍເຖິງຂັ້ນຕອນໃນການຮ້ອງຂໍຂອງກຸ່ມເປົ້າໝາຍດັ່ງກ່າວ.

ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດນິຕິກຳ:

- ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ):

  ຄ່າໃຊ້ຈ່າຍເບື້ອງຕົ້ນ ສຳລັບບຸກຄົນຜູ້ໜຶ່ງໃນການປະຕິບັດກົດໝາຍສະບັບປັບປຸງໃໝ່ ຄາດວ່າຈະຕົກຢູ່ 20,000 ກີບ/ຄົນ.
- ຄ່າໃຊ້ຈ່າຍ ໃນແຕ່ລະປີ:

  ຄ່າໃຊ້ຈ່າຍໃນແຕ່ລະປີສຳລັບ ບຸກຄົນຜູ້ໜຶ່ງ ໃນການປະຕິບັດກົດໝາຍສະບັບປັບປຸງໃໝ່ ຄາດວ່າຈະຕົກຢູ່ 20,000 ກີບ/ຄົນ.

**4.1.3 ການທາບທາມຄຳເຫັນ**

ພາຍຫຼັງສຳເລັດການສ້າງຮ່າງກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ) ແລ້ວ ທາງຄະນະຮັບຜິດຊອບ ໄດ້ນຳເອົາຮ່າງກົດໝາຍດັ່ງກ່າວ ລົງທາບທາມຄຳເຫັນຢູ່ສອງແຂວງ ຄື ແຂວງສະຫວັນນະເຂດ ແລະ ແຂວງ ຈຳປາສັກ ໃນວັນທີ 13-17 ມີນາ 2017 ຊຶ່ງຜູ້ເຂົ້າຮ່ວມກໍໄດ້ປະກອບຄຳເຫັນຢ່າງຫຼາກຫຼາຍ ແລະ ທາງຄະນະຮັບຜິດ ຊອບກໍໄດ້ນຳເອົາຄຳເຫັນເຫຼົ່ານັ້ນ ມາພິຈາລະນາປັບປຸງຮ່າງກົດໝາຍໃຫ້ສົມບູນຂຶ້ນຕື່ມ.

**4.1.4 ສະຫຼຸບ**

ຖ້າໜຶ່ງໃນຕົວຊີ້ວັດຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍຖືວ່າຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຫຼາຍຕໍ່ສັງຄົມ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດ ກໍຮຽກຮ້ອງໃຫ້ເຮັດການວິເຄາະແບບລົງເລິກ ກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນຢ່າງກວ້າງຂວາງກັບຊຸມຊົນ.

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☐ | ☐ | ☑ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ)* | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ)* | ☐ | ☑ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບ | ☐ | ☑ | ☐ |

| | | | |
|---|---|---|---|
| *(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍ ຕໍ່ວິທີການດໍາລົງຊີວິດຂອງບຸກຄົນ)* | | | |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກໍາທີ່ສະເໜີສ້າງ ຫຼື ປັບປຸງ *(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

**4.2 ພາກທຸລະກິດ**

**4.2.1 ຜົນກະທົບ**

ກົດໝາຍສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານການໃຫ້ສັນຊາດ, ການຖອນສັນຊາດຄືນ, ການປະສົມຊາດ ແລະ ການໃຫ້ສັນຊາດລາວຄືນ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ, ສະນັ້ນຈຶ່ງຄາດວ່າຈະບໍ່ມີຜົນກະທົບຕໍ່ພາກທຸລະກິດ.

**4.2.2 ເງື່ອນໄຂໃນການປະຕິບັດນິຕິກໍາ**

ໃຫ້ກໍານົດເງື່ອນໄຂທີ່ຮຽກຮ້ອງ ໃຫ້ພາກທຸລະກິດຕ້ອງປະຕິບັດນິຕິກໍາທີ່ສະເໜີສ້າງ ຫຼື ປັບປຸງ (ຂໍ້ກໍານົດ/ຄ່າໃຊ້ຈ່າຍ ໃນການປະຕິບັດນິຕິກໍາ ເຊັ່ນ: ການຂໍໃບອະນຸຍາດ, ການຈັດຝຶກອົບຮົມ, ການເກັບກໍາບັນທຶກຕ່າງໆ, ການຈັດຊື້ ແລະ ການແຈ້ງການ ຫຼື ເຜີຍແຜ່ຕໍ່ສັງຄົມ/ລັດຖະບານ).

ຄາດຄະເນຄ່າສິ້ນເປືອງສະເລ່ຍຕໍ່ຫົວໜ່ວຍທຸລະກິດໃນການປະຕິບັດນິຕິກໍາ:

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ):

ຄ່າໃຊ້ຈ່າຍ ໃນແຕ່ລະປີ:

**4.2.3 ການທາບທາມຄໍາເຫັນ**

ໃຫ້ກໍານົດທຸລະກິດ ທີ່ມີສ່ວນກ່ຽວຂ້ອງ ຊຶ່ງຈະຖືກທາບທາມຄໍາເຫັນ ແລະ ຜົນໄດ້ຮັບຈາກການທາບທາມຄໍາເຫັນນັ້ນ.

**4.2.4 ສະຫຼຸບ**

ຖ້າໜຶ່ງໃນຕົວຊີ້ວັດຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍຖືວ່າຮ່າງນິຕິກໍາທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຫຼາຍຕໍ່ພາກທຸລະກິດ. ຖ້າຮ່າງນິຕິກໍານັ້ນຫາກມີຜົນກະທົບຫຼາຍເທົ່າໃດ ກໍຮຽກຮ້ອງໃຫ້ເຮັດການວິເຄາະແບບລົງເລິກກ່ຽວກັບທາງເລືອກ ແລະ ມີການທາບທາມຄໍາເຫັນຢ່າງກວ້າງຂວາງກັບພາກທຸລະກິດ.

| **ຕົວຊີ້ວັດຜົນກະທົບ** | **ບໍ່ມີ** | **ໜ້ອຍ** | **ຫຼາຍ** |
|---|---|---|---|
| ຈໍານວນຂະແໜງອຸດສາຫະກໍາທີ່ໄດ້ຮັບຜົນກະທົບ *(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງຂະແໜງອຸດສາຫະກໍາສ່ວນໃຫຍ່/ທັງໝົດໄດ້ຮັບ ຜົນກະທົບ)* | ☐ | ☐ | ☐ |
| ຈໍານວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ *(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດ ໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວ ທີ່ຖືກຜົນກະທົບ)* | ☐ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສໍາລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ) *(ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 1.600.000 ກີບ ຕໍ່ໜຶ່ງຫົວໜ່ວຍທຸລະກິດ)* | ☐ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການເຮັດທຸລະກິດ ທີ່ມີຢູ່ໃນປັດຈຸບັນ *(ຂໍ້ແນະນໍາ- ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດໍາເນີນທຸລະກິດ)* | ☐ | ☐ | ☐ |
| ການບໍ່ເຫັນດີ ຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກໍາທີ່ສະເໜີສ້າງ ຫຼື ປັບປຸງ *(ຂໍ້ແນະນໍາ- ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບ ຜົນ* | ☐ | ☐ | ☐ |

| | | | |
|---|---|---|---|
| *ກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | | | |

**4.3 ລັດຖະບານ**

**4.3.1 ຜົນກະທົບ**

ອົງການທີ່ໄດ້ຮັບຜົນກະທົບຈາກຮ່າງກົດໝາຍສະບັບນີ້ ປະກອບມີ ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ກະຊວງພາຍໃນ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ອົງການປົກຄອງທ້ອງຖິ່ນ ຊຶ່ງແມ່ນອົງການທີ່ກົດໝາຍສະບັບປັບປຸງໃໝ່ໄດ້ກຳນົດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບໃນການຄົ້ນຄວ້າພິຈາລະນາກ່ຽວກັບວຽກງານສັນຊາດ.

**ຜົນກະທົບທາງບວກ:**

- ມີການແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ;
- ແຕ່ລະພາກສ່ວນຈະຮູ້ໄດ້ເຖິງ ສິດ ແລະ ໜ້າທີ່ຂອງຕົນ ກ່ຽວກັບວຽກງານສັນຊາດ.

**ຜົນກະທົບທາງລົບ:**

- ເປັນການເພີ່ມຄວາມຮັບຜິດຊອບ ໃຫ້ແກ່ອົງການຈັດຕັ້ງທີ່ໄດ້ເພີ່ມເຂົ້າມາໃໝ່;
- ເປັນການເພີ່ມຄ່າໃຊ້ຈ່າຍໃຫ້ແກ່ບັນດາອົງການທີ່ໄດ້ເພີ່ມເຂົ້າໃໝ່.

**4.3.2 ເງື່ອນໄຂໃນການປະຕິບັດນິຕິກຳ**

ພາຍຫຼັງກົດໝາຍສະບັບປັບປຸງ ໄດ້ຖືກປະກາດໃຊ້ ແລະ ມີຜົນສັກສິດແລ້ວ ທາງຄະນະຮັບຜິດຊອບຈະຕ້ອງໄດ້ຈັດການຝຶກອົບຮົມເຜີຍແຜ່ກົດໝາຍໃຫ້ແກ່ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ປະຕິບັດວຽກງານສັນຊາດ ເພື່ອໃຫ້ເຂົ້າໃຈກ່ຽວກັບກົດໝາຍສະບັບປັບປຸງນີ້ ຊຶ່ງໃນການຝຶກອົບຮົມເຜີຍແຜ່ນັ້ນ ຄະນະຮັບຜິດຊອບຈະຕ້ອງໄດ້ຈັດພິມກົດໝາຍ ແລະ ເອກະສານທີ່ກ່ຽວຂ້ອງ ເພື່ອຮັບໃຊ້ໃຫ້ແກ່ການຝຶກອົບຮົມດັ່ງກ່າວ.

ຄ່າໃຊ້ຈ່າຍທີ່ລັດຖະບານຕ້ອງນຳໃຊ້ເຂົ້າໃນການຄຸ້ມຄອງບໍລິຫານລັດ ແລະ ຈັດຕັ້ງປະຕິບັດນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ.

- ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ):

  ໃນເບື້ອງຕົ້ນຄາດວ່າຈະຕ້ອງໄດ້ນຳໃຊ້ງົບປະມານ 150,000,000 ກີບ ເຂົ້າໃນການຄຸ້ມຄອງບໍລິຫານລັດ ແລະ ຈັດຕັ້ງປະຕິບັດກົດໝາຍສະບັບປັບປຸງໃໝ່.
- ຄ່າໃຊ້ຈ່າຍ ຕໍ່ປີ:

  ໃນແຕ່ລະປີ ຄາດວ່າຈະຕ້ອງໄດ້ນຳໃຊ້ງົບປະມານ 150,000,000 ກີບ ເຂົ້າໃນການຄຸ້ມຄອງບໍລິຫານລັດ ແລະ ຈັດຕັ້ງປະຕິບັດກົດໝາຍສະບັບປັບປຸງໃໝ່.

**4.3.3 ການທາບທາມຄຳເຫັນ**

ພາຍຫຼັງສຳເລັດການສ້າງຮ່າງກົດໝາຍວ່າດ້ວຍ ສັນຊາດລາວ (ສະບັບປັບປຸງ) ທາງຄະນະຮັບຜິດຊອບ ກໍໄດ້ນຳເອົາຮ່າງກົດໝາຍ ລົງທາບທາມຄຳເຫັນ ຈາກອົງການປົກຄອງທ້ອງຖິ່ນ ໃນ ສອງແຂວງ ຄື ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ ໂດຍມີຜູ້ເຂົ້າຮ່ວມທັງໝົດ 24 ທ່ານ ຊຶ່ງຜູ້ເຂົ້າຮ່ວມກໍໄດ້ປະກອບຄຳເຫັນໃສ່ຮ່າງກົດໝາຍຢ່າງຫຼາກຫຼາຍ ແລະ ທາງຄະນະຮັບຜິດຊອບ ກໍໄດ້ນຳເອົາຄຳເຫັນເຫຼົ່ານັ້ນມາພິຈາລະນາປັບປຸງຮ່າງກົດໝາຍໃຫ້ຄົບຖ້ວນຂຶ້ນຕື່ມ (ລາຍລະອຽດຂອງຄຳເຫັນໃຫ້ເບິ່ງຢູ່ໃນເອກະສານຊ້ອນທ້າຍ).

**4.3.4 ສະຫຼຸບ**

ຖ້າໜຶ່ງໃນຕົວຊີ້ວັດຂ້າງລຸ່ມນີ້ ຫາກຄາດຄະເນວ່າມີຜົນກະທົບຫຼາຍ ກໍຖືວ່າຮ່າງນິຕິກຳ ທີ່ສະເໜີສ້າງ ຫຼື ປັບປຸງນັ້ນ ມີຜົນກະທົບຫຼາຍ ຕໍ່ລັດຖະບານ. ຖ້າຮ່າງນິຕິກຳນັ້ນ ຫາກມີຜົນກະທົບຫຼາຍເທົ່າໃດ ກໍຮຽກຮ້ອງໃຫ້ຕ້ອງ

ມີການເຮັດວິເຄາະແບບລົງເລິກກ່ຽວກັບທາງເລືອກ ແລະ ມີການທາບທາມຄຳເຫັນກັບອົງການຈັດຕັ້ງຂອງລັດຢ່າງກວ້າງຂວາງ.

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງນິຕິກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ)* | ☐ | ☑ | ☐ |
| ຈຳນວນ ອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການ ຢູ່ຂັ້ນແຂວງ)* | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ)* | ☐ | ☐ | ☑ |
| ລະດັບການປ່ຽນແປງ ຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ)* | ☐ | ☑ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງອົງການຈັດຕັ້ງລັດ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

## ການຈັດຕັ້ງປະຕິບັດ

### 5.1 ການສະໜັບສະໜູນ ແກ່ບຸກຄົນ

ໃນການສະໜັບສະໜູນໃຫ້ບຸກຄົນປະຕິບັດຕາມກົດໝາຍສະບັບປັບປຸງໃໝ່ນີ້ ລັດຖະບານໄດ້ມີການຊຸກຍູ້ດ້ວຍການໃຫ້ຂໍ້ມູນຜ່ານຊ່ອງທາງຕ່າງໆ ເປັນຕົ້ນການລົງເຜີຍແຜ່ກົດໝາຍຕາມບ້ານ, ການເຜີຍແຜ່ກົດໝາຍຕາມສື່ຕ່າງໆ ເປັນຕົ້ນ ເວັບໄຊ້ຂອງກະຊວງຍຸຕິທຳ, ນອກຈາກນີ້ ປະຊາຊົນຜູ້ທີ່ມີຄວາມສົນໃຈກ່ຽວກັບວຽກງານນີ້ ຍັງສາມາດເຂົ້າມາສອບຖາມໂດຍກົງນຳອົງການຈັດຕັ້ງລັດທີ່ກ່ຽວຂ້ອງ.

### 5.2 ການສະໜັບສະໜູນແກ່ພາກທຸລະກິດ

ຖ້າແມ່ນພາກທຸລະກິດຕ້ອງໄດ້ປະຕິບັດນິຕິກຳ ທີ່ສະເໜີສ້າງ ຫຼື ປັບປຸງ ໃຫ້ອະທິບາຍກ່ຽວກັບການຊ່ວຍເຫຼືອຂອງລັດຖະບານ ແກ່ພາກທຸລະກິດ ໂດຍສະເພາະແມ່ນ ວິສາຫະກິດຂະໜາດນ້ອຍ ແລະ ກາງ ມີຄືແນວໃດ ເພື່ອເອື້ອອຳນວຍ ແລະ ສ້າງເງື່ອນໄຂໃຫ້ແກ່ພາກທຸລະກິດນັ້ນ ໃນການປະຕິບັດບົດບັນຍັດ ທີ່ໄດ້ກຳນົດໄວ້ໃນຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ.

### 5.3 ແຜນການຈັດຕັ້ງປະຕິບັດ

ພາຍຫຼັງທີ່ກົດໝາຍມີຜົນສັກສິດແລ້ວ ທາງຄະນະຮັບຜິດຊອບຈະໄດ້ມີການຈັດຝຶກອົບຮົມ ໃຫ້ແກ່ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຜູ້ທີ່ປະຕິບັດວຽກງານສັນຊາດນີ້ ໂດຍຈະລົງຈັດຝຶກອົບຮົມເປັນສາມພາກ ຄື ພາກເໜືອ, ພາກກາງ ແລະ ພາກໃຕ້ ຊຶ່ງຄາດວ່າການຝຶກອົບຮົມຈະໃຊ້ເວລາປະມານ 3 ເດືອນ, ນອກຈາກນີ້ ຍັງຈະໄດ້ລົງເຜີຍແຜ່ກົດໝາຍໃຫ້ແກ່ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈ, ຄາດວ່າຈະໃຊ້ເວລາໃນການລົງເຜີຍແຜ່ປະມານ 3 ເດືອນ, ພາຍຫຼັງຝຶກອົບຮົມ, ເຜີຍແຜ່ກົດໝາຍສຳເລັດແລ້ວ ຈຶ່ງມີການເລີ່ມຈັດຕັ້ງປະຕິບັດກົດໝາຍສະບັບໃໝ່.

ໃນແຜນການທີ່ກ່າວມາຂ້າງເທິງນີ້ ຍັງມີສິ່ງທ້າທາຍຢູ່ເນື່ອງຈາກງົບປະມານ ແລະ ບຸກຄະລາກອນ ຂອງພາກສ່ວນທີ່ຮັບຜິດຊອບຍັງມີໜ້ອຍ, ແຕ່ທາງພາກສ່ວນຮັບຜິດຊອບ ກໍຈະພະຍາຍາມສູ້ຊົນໃຫ້ສຳເລັດຕາມຄາດໝາຍ.

**5.4 ງົບປະມານ ແລະ ແຫຼ່ງທຶນ**

ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສັນຊາດລາວ (ສະບັບປັບປຸງ) ໃນແຕ່ລະຂັ້ນຂອງພາກລັດ ຄາດວ່າຈະນຳໃຊ້ງົບປະມານ 200,000,000 ກີບ/ປີ ແລະ ກໍນຳໃຊ້ງົບປະມານຂອງກະຊວງຍຸຕິທຳພຽງອັງການດຽວ.

**5.5 ທົບທວນຄືນ**

ພາຍຫຼັງສອງປີທີ່ກົດໝາຍສະບັບປັບປຸງໃໝ່ມີຜົນສັກສິດ ແລະ ຈັດຕັ້ງປະຕິບັດແລ້ວ ທຸກພາກສ່ວນທີ່ກ່ຽວ ຂ້ອງຈະມີການທົບທວນຄືນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ໃນສ່ວນຮັບຜິດຊອບຂອງຕົນ ແລະ ກະຊວງຍຸຕິທຳຈະເປັນໃຈກາງໃນການທົບທວນຄືນ ກ່ຽວກັບການປະຕິບັດກົດໝາຍວ່າດ້ວຍສັນຊາດລາວສະບັບປັບປຸງໃໝ່ທັງໝົດ.

## ການອະນຸມັດ

ໄດ້ເຮັດອັນໃດໃນລຸ່ມນີ້

1. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄຳແນະນຳ ຫຼື

2. ☑ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດ ກາ ມີຄຳເຫັນຕໍ່ບົດປະເມີນຜົນ.

ນະຄອນຫຼວງວຽງຈັນ, ວັນທີ......................

**ຫົວໜ້າຄະນະຮັບຜິດຊອບປັບປຸງ**
**ກົດໝາຍວ່າດ້ວຍສັນຊາດລາວ**